ພຣະຄຳພີສຳລັບຫຼານນ້ອຍ
ສະເໜີ

# ວັນຄືນພຣະຊິນເທື່ອທຳອິດ



ຂຽນໂດຍ: Edward Hughes

ແຕ້ມຮູບໂດຍ: Janie Forest
Alastair Paterson

ດັດແກ້ໂດຍ: Lyn Doerksen

ແປໂດຍ: Christian Lingua

ຈັດພິມໂດຍ: Bible for Children
www.M1914.org

©2020 Bible for Children, Inc.
ໃບອະນຸຍາດ: ທ່ານສາມາດອັດສຳເນົາ ຫຼືຕີພິມເລື່ອງນີ້ໄດ້
ແຕ່ຫ້າມເຮັດເພື່ອຈຳໜ່າຍເດັດຂາດ

ແມ່ຍິງຄົນີໜ່ງຢືນຢູ່ເທິງເນີນພູທີ່ມີສຽງເນືອງນັນ,
ສາຍຕາອັນເສົ້າໝອງຂອງນາງຫຼຽວເບິ່ງ
ເຫດການອັນໂຫດຮ້າຍ.
ລູກຊາຍຂອງນາງພວມຈະສິ້ນໃຈ.
ແມ່ນັ້ນຄືນາງມາຣີ,
ແລະນາງຢືນຢູ່ໃກ້ກັບບ່ອນ
ທີ່ພຣະເຢຊູຖືກຕອກຶຄຶງເທິງ
ກາງແຂນ.





ເຫດການແບບນີ້ເກີດຂຶ້ນໄດ້ແນວໃດ?
ພຣະເຢຊູຊົງຈົບຊີວິດອັນສວຍງາມ
ດ້ວຍວິທີທີ່ໂຫດຮ້າຍແບບນີ້ໄດ້
ແນວໃດ? ພຣະເຈົ້າປ່ອຍໃຫ້ພຣະບຸດ
ຂອງພຣະອົງຖືກຄຶງ
ເທິງໄມ້ກາງແຂນ
ແລະປ່ອຍໃຫ້ພຣະອົງ
ຕາຍທີ່ນັ້ນໄດ້
ແນວໃດ?
ພຣະເຢຊູຊົງເຮັດຫຍັງຜິດພາດໄປບໍ?
ຫຼືພຣະເຈົ້າຊົງເຮັດຫຍັງຜິດພາດໄປບໍ?



ບໍ່! ພຣະເຈົ້າບໍ່ໄດ້ເຮັດຫຍັງຜິດພາດ.
ພຣະເຢຊູກໍບໍ່ໄດ້ເຮັດຫຍັງຜິດພາດ.
ພຣະເຢຊູຊົງຮູ້ມາຕະຫຼອດວ່າ
ພຣະອົງຈະຖືກຄົນອະທໍາຂ້າຕາຍ.
ຕັ້ງແຕ່ຕອນທີ່ພຣະເຢຊູຊົງເປັນແອນ້ອຍ,
ຜູ້ເຖົ້າທີ່ຊື່ວ່າ ຊີໂມນ
ກໍໄດ້ບອກນາງ ມາຣີ
ແລ້ວເຖິງຄວາມໂສກເສົ້າທີ່ຢູ່ເບື້ອງໜ້າ.



ສອງສາມມື້ກ່ອນພຣະເຢຊູຖືກຶດງທີ່ກາງແຂນ,
ມີແມ່ຍິງຄືນຶໜ່ງໄດ້ມາຫາພຣະອົງ
ແລະໃຊ້ນໍ້າມັນຫອມທົາດສິງພຣະບາດຂອງພຣະອົງ.
ພວກສາວົກກ່າວຈົ່ມວ່າ, “ນາງກໍາລັງສິ້ນເປືອງເງິນຖິ້ມລ້າໆ.”



ຝ່າຍພຣະເຢຊູຊົງຕອບວ່າ,
“ນາງໄດ້ເຮັດການດີແລ້ວ.
ນາງເຮັດເຊັ່ນນັ້ນກໍເພື່ອເປັນການສົ່ງສະການເຮົາ.”
ຄຳເວົ້າຂອງພຣະເຢຊູນັ້ນແປກຫຼາຍ!

ຫຼັງຈາກນັ້ນ, ຢູດາ ໜຶ່ງໃນສາວົກສິບສອງຄົນຂອງພຣະອົງ
ກໍໄດ້ຕົກລົງທີ່ຈະມອບພຣະເຢຊູໃຫ້ກັບຫົວໜ້າປະໂລຫິດດ້ວຍເງິນ
30 ຫຼຽນ.





ເມື່ອມາຮອດເທດສະການປັດສະຄາຂອງ
ຊາວຢິວ, ພຣະເຢຊູກໍໄດ້ຮ່ວມໂຕະອາຫານ
ກັບພວກສາວົກເປັນເທື່ອສຸດທ້າຍ.
ພຣະອົງໄດ້ບອກພວກເຂົາເຖິງສິ່ງທີ່ພິເສດ
ເລື່ອງພຣະເຈົ້າ
ແລະພຣະສັນຍາຕໍ່ຜູ້ທີ່ຮັກພຣະອົງ.
ຫຼັງຈາກນັ້ນ ພຣະເຢຊູກໍໄດ້ໃຫ້ພວກເຂົາ
ຮັບເອົາເຂົ້າຈີ່ ແລະດື່ມຈາກຈອກດຽວກັນ.



ການເຮັດເຊັ່ນນີ້ ກໍເພື່ອໃຫ້ພວກເຂົາ
ໄດ້ລະນຶກເຖິງພຣະກາຍ ແລະພຣະ
ໂລຫິດຂອງພຣະອົງທີ່ຊົງປະທານເພື່ອ
ອະໄພຜິດບາບຂອງເຮົາ.

ຫຼັງຈາກນັ້ນ ພຣະເຢຊູກໍບອກແກ່ມິດສະຫາຍວ່າ ພຣະອົງຈະຖືກທໍລະຍົດ,
ແລະພວກສາວົກຈະພາກັນແຕກໜີໄປ. ຝ່າຍເປໂຕກໍເວົ້າຄ້ານທັນທີວ່າ,
“ຂ້ານ້ອຍຈະບໍ່ໜີໄປໃສ.” ແຕ່ພຣະເຢຊູຊົງກ່າວຕອບລາວວ່າ,
“ມື້ນີ້ ກ່ອນໄກ່ຂັນ, ເຈົ້າຈະປະຕິເສດວ່າບໍ່ຮູ້ຈັກເຮົາເຖິງສາມເທື່ອ.”





ຕໍ່ມາໃນຄືນດຽວກັນນັ້ນ,
ພຣະເຢຊູໄດ້ສະເດັດອອກໄປ
ອະທິຖານທີ່ສວນເຄັດເຊມາເນ.
ສາວົກສອງຄົນທີ່ໄປນຳພຣະອົງ
ໄດ້ນອນຫລັບໄປ.
ຝ່າຍພຣະເຢຊູຊົງອ້ອນວອນວ່າ,
"ຂ້າແດ່ພຣະບິດາ, ຖ້າເປັນໄປໄດ້
ຂໍໃຫ້ຈອກນີ້ເລື່ອນພົ້ນໄປຈາກ
ລູກສາ ແຕ່ຂໍຢ່າໃຫ້ເປັນໄປຕາມ
ຄວາມປະສົງຂອງຂ້ານ້ອຍ
ແຕ່ໃຫ້ເປັນໄປຕາມນ້ຳພຣະໄທ
ຂອງພຣະອົງ."

ທັນໃດນັ້ນ ກໍມີຝູງຊົນໝູ່ໃຫຍ່ເຂົ້າມາໃນສວນ, ຊຶ່ງນໍາມາໂດຍຢູດາ.
ພຣະເຢຊູບໍ່ໄດ້ຂັດຂືນໃດໆ ແຕ່ເປໂຕໄດ້ຕັດຫູຂອງຊາຍຄົນນຶ່ງຂາດ.
ພຣະເຢຊູຊົງຈັບທີ່ຫູຂອງຄົນນັ້ນຢ່າງງຽບສະຫງົບ
ແລະຊົງຮັກສາລາວໃຫ້ຫາຍດີ.
ພຣະອົງຊົງຮູ້ວ່າການຖືກຈັບກຸມແມ່ນ
ສ່ວນນຶ່ງໃນແຜນການຂອງພຣະເຈົ້າ.



ຝູງຊົນໄດ້ນຳພຣະເຢຊູໄປຍັງເຮືອນຂອງມະຫາປະໂລຫິດ.
ໃນທີ່ນັ້ນ ຜູ້ນຳຊາວຢິວໄດ້ຕັດສິນປະຫານພຣະອົງ.
ໃກ້ໆນັ້ນກໍມີເປໂຕທີ່ພວມນັ່ງຢູ່ຂ້າງກອງໄຟກັບຄົນຮັບໃຊ້ ແລະເຝົ້າເບິ່ງຢູ່.
ປະຊາຊົນຈ້ອງເບິ່ງທີ່ເປໂຕ
ແລະຖາມເຖິງສາມຄັ້ງວ່າ,
"ເຈົ້າກໍເຄີຍຢູ່ກັບເຢຊູມາກ່ອນ!"
ຝ່າຍເປໂຕກໍປະຕິເສດທຸກຄັ້ງ,
ເໝືອນຢ່າງທີ່ພຣະເຢຊູໄດ້ກ່າວໄວ້.
ເຖິງເປໂຕຈະເຄີຍສາບານໄວ້
ແລ້ວກໍຕາມ.



ເອິກກາ ອີ ເອິກກາ ເອິກກາ



ຫຼັງຈາກປະຕິເສດໄດ້ສາມເທື່ອແລ້ວ,
ໄກ່ກໍຂັນທັນທີ.
ເໝືອນກັບເປັນພຣະສຸລະສຽງຂອງພຣະເຈົ້າເຖິງເປໂຕ.

ເມື່ອລະນຶກໄດ້ເຖິງຄຳເວົ້າຂອງພຣະເຢຊູ,
ເປໂຕກໍຮ້ອງໄຫ້ອອກມາດ້ວຍຄວາມຂົມຂື່ນ.



ຢູດາເອງກໍເສຍໃຈຫຼາຍ.
ລາວຮູ້ວ່າພຣະເຢຊູບໍ່ໄດ້ເຮັດຜິດບາບ
ຫຼືເຮັດອັນໃດທີ່ຜິດກົດໝາຍເລີຍ.
ຢູດານຳເງິນ 30 ຫຼຽນໄປສົ່ງຄືນ,
ແຕ່ພວກປະໂລຫິດບໍ່ຮັບເອົາ.



ຝ່າຍຢູດາໄດ້ຖິ້ມເງິນນັ້ນລົງພື້ນ,
ແລ້ວແລ່ນອອກໄປ -
ຕໍ່ມາກໍປະກົດວ່າລາວໄດ້ແຂວນ
ຄໍຕົນເອງຕາຍ.



ພວກປະໂລຫິດໄດ້ນຳພຣະເຢຊູໄປຫາປີລາດ, ຜູ້ປົກຄອງຊາວໂຣມັນ. ປີລາດກ່າວວ່າ, “ເຮົາບໍ່ພົບຄວາມຜິດໃດໆໃນຊາຍຜູ້ນໍ້າ.” ແຕ່ຝູງຊົນຍັງຮ້ອງສຽງດັງວ່າ, “ຈີ່ງຄຶງມັນ! ຈີ່ງຄຶງມັນສາ!”

ໃນທີ່ສຸດປີລາດກໍຍອມຕໍ່ຄຳຮ້ອງຂໍຂອງຝູງຊົນ
ແລະໄດ້ສັ່ງປະຫານພຣະເຢຊູ
ໂດຍການຕອກຶຄຶງທີ່ໄມ້ກາງແຂນ.
ພວກທະຫານໄດ້ຕີພຣະເຢຊູ,
ຖົ່ມນ້ຳລາຍໃສ່ພຣະອົງ
ແລະຂ້ຽນພຣະອົງ.



ພຣະເຢຊູຊົງຮູ້ມາຕະຫຼອດວ່າພຣະອົງຈະສິ້ນພຣະຊົນທີ່ໄມ້ກາງແຂນ.
ພຣະອົງຊົ່ງຮູ້ວ່າການສິ້ນພຣະຊົນຂອງພຣະອົງນັ້ນ
ຈະນຳມາຊຶ່ງການຍົກໂທດບາບສຳລັບຜູ້ທີ່ໄວ້ວາງໃຈໃນພຣະອົງ.



ມີໂຈນສອງຄົນຖືກຄຶງໄວ້ຂ້າງໆພຣະອົງ.
ຜູ້ໜຶ່ງເຊື່ອໃນພຣະເຢຊູ -
ແລະໄດ້ໄປແຜ່ນດິນສະຫວັນ.
ສ່ວນອີກຜູ້ໜຶ່ງບໍ່ໄດ້ໄປ.

ຫຼັງຈາກທີ່ທົນທຸກທໍລະມານຢູ່ຫຼາຍຊົ່ວໂມງ,
ພຣະເຢຊູຊົງກ່າວວ່າ, "ສຳເລັດແລ້ວ."
ແລ້ວກໍຊົງສິ້ນພຣະຊົນ.
ພາລະກິດຂອງພຣະອົງເປັນທີ່ສຳເລັດ.
ມິດສະຫາຍໄດ້ປົງພຣະສົບ
ຂອງພຣະອົງໄວ້ໃນອຸບ
ໂມງສ່ວນບຸກຄົນ.



ທະຫານໂຣມັນ ໄດ້ປະທັບຕາ
ແລະເຝົ້າຍາມອຸບໂມງເປັນຢ່າງດີ
ຊຶ່ງບໍ່ສາມາດມີໃຜເຂົ້າໄປ
ຫຼືອອກມາໄດ້.



ຖ້າຫາກວ່າອັນນີ້ເປັນຕອນຈົບຂອງເລື່ອງ,
ກໍຄືງເປັນເລື່ອງທີ່ເສົ້າທີ່ສຸດ.
ແຕ່ພຣະເຈົ້າຊິງກະທຳບາງຢ່າງທີ່
ພິເສດຫຼາຍ.
ພຣະເຢຊູບໍ່ໄດ້ຕາຍເລີຍ!





ຕອນຮຸ່ງເຊົ້າມື້ທຳອິດຂອງອາທິດນັ້ນ,
ສາວົກບາງຄົນຂອງພຣະອົງເຫັນກ້ອນຫີນ
ອັດປາກອຸບໂມງຖືກກິ້ງອອກແລ້ວ.
ເມື່ອພວກເຂົາເຂົ້າໄປຂ້າງໃນ,
ພຣະສົບຂອງພຣະອົງກໍບໍ່ຢູ່ທີ່
ນັ້ນແລ້ວ.

ແມ່ຍິງຄົນໜຶ່ງຍັງຢືນຢູ່ທີ່ປາກອຸບໂມງ
ແລະຮ້ອງໄຫ້. ພຣະເຢຊູຊົງປະກົດແກ່ນາງ!
ນາງຮີບຮ້ອນກັບໄປບອກສາວົກຄົນອື່ນໆດ້ວຍ
ຄວາມຊົມຊື່ນຍິນດີ. "ພຣະເຢຊູຊົງພຣະຊົນຢູ່!
ພຣະເຢຊູຊົງເປັນຄືນມາຈາກຕາຍແລ້ວ!"





ຫຼັງຈາກນັ້ນບໍ່ດົນ ພຣະເຢຊູກໍສະເດັດມາຫາພວກສາວົກ,
ແລະສະແດງໃຫ້ພວກເຂົາເຫັນພຣະຫັດຂອງພຣະອົງທີ່ຖືກຕະປູຕອກ.
ແມ່ນແທ້ໆ, ພຣະເຢຊູຊົງເປັນຄືນມາອີກຄັ້ງ!
ພຣະອົງອະໄພໂທດບາບໃຫ້ແກ່ເປໂຕທີ່ໄດ້ປະຕິເສດພຣະອົງ
ແລະສັ່ງໃຫ້ພວກສາວົກໄປບອກທຸກຄົນກ່ຽວກັບເລື່ອງພຣະອົງ.
ຫຼັງຈາກນັ້ນ ພຣະອົງກໍສະເດັດກັບຂຶ້ນສູ່ສະຫວັນ
ບ່ອນທີ່ພຣະອົງຈາກມາ.

วันคืนพระຊົນເທື່ອທຳອິດ

ເລື່ອງໃໝ່ງຈາກພຣະຄຳຂອງພຣະເຈົ້າ, ພຣະຄຳພີ,

ທີ່ສາມາດພົບໄດ້ໃນ

ພຣະທຳມັດທາຍ ບົດທີ 26-28; ລູກາ ບົດທີ 22-24;
ໂຢຮັນ ບົດທີ 13-21

“ຄຳສອນຂອງພຣະອົງໃຫ້ແສງສະຫວ່າງ.”
ເພງສັນລະເສີນ 119:130

ຈິບບໍລິບູນ

ເລື່ອງລາວໃນພຣະຄຳພີຕອນນີ້ບອກພວກເຮົາກ່ຽວກັບພຣະເຈົ້າຜູ້ວິເສດ
ຜູ້ທີ່ສ້າງພວກເຮົາ ແລະຢາກໃຫ້ພວກຫຼານຮູ້ຈັກກັບພຣະເຈົ້າດ້ວຍ.

ພຣະເຈົ້າຊົງຮູ້ວ່າ ພວກເຮົາໄດ້ເຮັດການຊົ່ວຫຼາຍຢ່າງ ຊຶ່ງພຣະອົງເອີ້ນວ່າ ຜິດບາບ.
ບົດລົງໂທດຂອງຄວາມບາບຄືຄວາມຕາຍ. ແຕ່ພຣະເຈົ້າຊົງຮັກຫຼານຫຼາຍ
ຈຶ່ງໄດ້ສົ່ງພຣະບຸດອົງດຽວຂອງພຣະອົງລົງມາ, ຄືພຣະເຢຊູ, ໃຫ້ມາຕາຍທີ່ໄມ້ກາງແຂນ
ແລະຮັບໂທດບາບແທນເຮົາ. ຫຼັງຈາກນັ້ນ ພຣະອົງກໍເປັນຄືນມາຈາກຕາຍ
ແລະສະເດັດຄືນສູ່ເຮືອນຂອງພຣະອົງຄືຟ້າສະຫວັນ! ຖ້າຫຼານເຊື່ອໃນພຣະເຢຊູ
ແລະຂໍການອະໄພໂທດບາບຈາກພຣະອົງ, ພຣະອົງຈະຊົງຍົກໂທດໃຫ້ແນ່ນອນ!
ພຣະອົງຈະສະເດັດມາປະທັບໃນຊີວິດຂອງຫຼານທັນທີ,
ແລະຫຼານຈະໄດ້ຢູ່ນຳພຣະອົງຕະຫຼອດໄປເປັນນິດ.

ຖ້າຫຼານເຊື່ອວ່າອັນນີ້ແມ່ນຄວາມຈິງແທ້, ກໍໃຫ້ອະທິຖານກັບພຣະເຈົ້າຕາມນີ້:
ຂ້າແດ່ພຣະເຢຊູ, ຂ້ານ້ອຍເຊື່ອວ່າພຣະອົງຊົງເປັນພຣະເຈົ້າ
ແລະໄດ້ບັງເກີດມາເປັນມະນຸດຕາຍທີ່ໄມ້ກາງແຂນແທນຜິດບາບຂອງຂ້ານ້ອຍ
ແລະບັດນີ້ພຣະອົງໄດ້ຊົງເປັນຄືນມາອີກຄັ້ງ. ຂໍຊົງສະເດັດມາປະທັບໃນຊີວິດຂອງຂ້ານ້ອຍ
ແລະຍົກໂທດຜິດບາບຂອງຂ້ານ້ອຍ, ຂໍຊົງປະທານຊີວິດໃໝ່ໃຫ້ແກ່ຂ້ານ້ອຍດ້ວຍໃນເວລານີ້
ເພື່ອວັນີໜຶ່ງຂ້ານ້ອຍຈະໄດ້ຢູ່ນຳພຣະອົງຕະຫຼອດໄປເປັນນິດ.
ຂໍຊົງຊ່ອຍຂ້ານ້ອຍໃຫ້ເຊື່ອຟັງພຣະອົງ ແລະມີຊີວິດຢູ່ເພື່ອພຣະອົງ ເປັນລູກ. ອາແມນ.

ຈົ່ງອ່ານພຣະຄຳພີ ແລະສົນທະນານຳພຣະເຈົ້າທຸກວັນ! ໂຢຮັນ 3:16